ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 07144 /ກພສ

ນະຄອນຫຼວງວຽງຈັນ,ວັນທີ 11 JUN 2013

# ແຈ້ງການແນະນຳ

**ເຖິງ:** ຫົວໜ້າພາສີປະຈຳເຂດ, ຫົວໜ້າດ່ານພາສີສາກົນ ໃນທົ່ວປະເທດ

**ເລື່ອງ:** ວິທີການກວດການ້ຳມັນ ນຳເຂົ້າມາ ສປປ ລາວ

- ອີງຕາມ ກົດໝາຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011
- ອີງຕາມ ດຳລັດ 114/ນຍ, ລົງວັນທີ 06 ເມສາ 2011 ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ,ເຄື່ອງຂອງ.

ເພື່ອຮັບປະກັນໃນການກວດການ້ຳມັນນຳເຂົ້າ ຜ່ານພາສີຊາຍແດນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບ ໃນທົ່ວປະເທດ.

**ກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:**

1. ການກວດກາເອກະສານຕ້ອງໃຫ້ຄົບຖ້ວນຄື ໃບຂົນສົ່ງສິນຄ້າ(ສບ), ໃບຢັ້ງຢືນບໍລິມາດ (ໃບຕວງນ້ຳຂອງໄທ ), ໃບແຈ້ງພາສີຂາອອກຂອງປະເທດສົ່ງອອກ, ໃບຕິດຊັ່ງນ້ຳໜັກ.
2. ລົດບັນທຸກນ້ຳມັນ ຂະໜາດບັນຈຸປະກອບມີແຕ່ລະຂະໜາດ ຄື ຂະໜາດ 50.000 ລິດ, 40.000 ລິດ, 38.000 ລິດ, 36.000 ລິດ ແລະ 32.000 ລິດ.
3. ລົດບັນທຸກນ້ຳມັນແຕ່ລະຄັນ ຈະແບ່ງອອກເປັນແທ່ງບັນຈຸນ້ຳມັນຫຼາຍຫ້ອງ ແລະ ຈະມີແປ້ນບົງບອກຂອງການບັນຈຸນ້ຳມັນ ມີຄື: ແປ້ນຕົວເລກ 1.000 ລິດ, 2.000 ລິດ, 3.000 ລິດ 4.000 ລິດ ຈົນຮອດຂະໜາດບັນຈຸສູງສຸດຂອງແຕ່ລະຫ້ອງໄວ້ຂ້າງນອກຂອງແທ່ງນ້ຳມັນແຕ່ລະ ຫ້ອງ.
4. ວິທີການສົມທຽບ ໃນການກວດກາລະຫວ່າງ ຫົວໜ່ວຍລິດ ແລະ ຫົວໜ່ວຍນ້ຳໜັກ ແຕ່ລະປະເພດນ້ຳມັນຄືດັ່ງລຸ່ມນີ້:
   - 4.1 ນ້ຳມັນແອັດຊັງ 1 ລິດ ເທົ່າກັບ 0.720 ກິໂລກຣາມ
   - 4.2 ນ້ຳມັນກະຊວນ 1 ລິດ ເທົ່າກັບ 0,860 ກິໂລກຣາມ
5. ການຂຽນຢັ້ງຢືນຜົນຂອງການກວດກາໃສ່ຫລັງໃບແຈ້ງພາສີເປັນລາຍລະອຽດໃຫ້ປະຕິບັດ ຄືດັ່ງນີ້
   - ກວດກາເອກະສານປະກອບ ໃຫ້ມີເອກະສານທີ່ກຳນົດໄວ້ໃນຂໍ້ 1.
   - ປະເພດລົດບັນທຸກ ໃຫ້ລະບຸຂໍ້ມູນຕາມທີ່ກຳນົດໄວ້ໃນຂໍ້ທີ 2.
   - ການກວດກາແປ້ນບົງ ບອກຂອງການບັນຈຸໃຫ້ອີງຕາມຂໍ້ມູນທີ່ກຳນົດໄວ້ໃນຂໍ້ທີ 3.
   - ການສົມທຽບໃບຕາຊັ່ງ ອີງຕາມໃບຕາຊັ່ງ ສະບັບເລກທີ........ລົງວັນທີ.......ເປັນບ່ອນອີງເພື່ອສົມທຽບໃນການຢັ້ງຢືນຜົນຂອງການກວດກາ.

ດັ່ງນັ້ນ, ກົມພາສີ ຈຶ່ງອອກແຈ້ງການແນະນຳ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມພາສີ

ພາດສະພັງທອງ ສີພັນດອນ.

thsanhangthong SIPHANDO

**ບ່ອນນຳສົ່ງ:**

- ທ່ານຫົວໜ້າ ຫ້ອງການກະຊວງການເງິນ 01 ສະບັບ ເພື່ອຊາບ
- ພະແນກອ້ອມຂ້າງກົມພາສີ 01 ສະບັບ
- ເກັບມ້ຽນສຳເນົາ 01 ສະບັບ